ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ທະນາຄານແຫ່ງ ສປປ ລາວ**

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 494/ກຄສງ

ນະຄອນຫຼວງວຽງຈັນ, ວັນທີ 25 ພະຈິກ 2020

# ແຈ້ງການ

**ເຖິງ:** ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ.

**ເລື່ອງ:** ການນຳໃຊ້ໃບອະນຸຍາດດຳເນີນທຸລະກິດ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ( ສະບັບປັບປຸງ ) ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 3 ຕຸລາ 2012;
- ອີງຕາມ ດຳລັດວ່າດ້ວຍການເຊົ່າສິນເຊື່ອ ສະບັບເລກທີ 11/ລບ, ລົງວັນທີ 18 ກຸມພາ 1999;
- ອີງຕາມ ດຳລັດວ່າດ້ວຍທຸລະກິດຊວດຈຳ ສະບັບເລກທີ 248/ລບ, ລົງວັນທີ 27 ກໍລະກົດ 2016;
- ອີງຕາມ ຂໍ້ຕົກລົງວ່າດ້ວຍມາດຕະການຕໍ່ການລະເມີດ ຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສະບັບເລກທີ 845/ທຫລ, ລົງວັນທີ 20 ກັນຍາ 2018.

ກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ໃນໄລຍະຜ່ານມາສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ປະຕິບັດຕາມລະບຽບທີ່ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງໄດ້ເປັນຢ່າງດີ. ເຖິງຢ່າງໃດກໍ່ຕາມ ໄດ້ມີປະກົດການທີ່ບາງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໄດ້ເອົາໃບອະນຸຍາດດຳເນີນທຸລະກິດຂອງຕົນ ໄປໃຫ້ບຸກຄົນອື່ນ ຫຼື ນິຕິບຸກຄົນອື່ນນຳໃຊ້ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຊຶ່ງເປັນການກະທຳທີ່ຂັດກັບລະບຽບການທີ່ກຳນົດໄວ້. ສະນັ້ນ ກົມຄຸ້ມຄອງສະຖາບັນການເງິນ ຈຶ່ງແຈ້ງມາຍັງທ່ານຊາບວ່າ ສະຖາບັນການເງິນໃດ ທີ່ເອົາໃບອະນຸຍາດດຳເນີນທຸລະກິດຂອງຕົນໄປໃຫ້ບຸກຄົນ, ນິຕິບຸກຄົນອື່ນນຳໃຊ້ ໂດຍທີ່ບໍ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ຈະຖືກປະຕິບັດມາດຕະການຕາມລະບຽບການທີ່ກ່ຽວຂ້ອງຕໍ່ສະຖາບັນການເງິນນັ້ນ ແລະ ບຸກຄົນທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຫວັງວ່າຈະໄດ້ຮັບການຮ່ວມມືໃນການຈັດຕັ້ງປະຕິບັດເປັນຢ່າງດີ.

ຫົວໜ້າກົມ

ທະນາຄານແຫ່ງ ສປປ ລາວ ກົມຄຸ້ມຄອງສະຖາບັນການເງິນ

**ອາລຸນ ບຸນຍົງ**